**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 81 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021, ມາດຕາ 29 ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ;
- ອີງຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ສະບັບເລກທີ 03/ສພຊ, ລົງວັນທີ 26 ມີນາ 2021;
- ອີງຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 110/ລບ, ລົງວັນທີ 26 ກັນຍາ 2022 ກ່ຽວກັບການສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ (2023-2025) ແລະ ການສະເໜີຂອງບັນດາອົງການທີ່ກ່ຽວຂ້ອງ;
- ອີງຕາມບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນຢ່າງເລິກເຊິ່ງ, ຖີ່ຖ້ວນຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດສະບັບດັ່ງກ່າວ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 28 ທັນວາ 2022.

## ກອງປະຊຸມ ຕົກລົງ:

**ມາດຕາ 1** **ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025**

ກອງປະຊຸມ ສະແດງຄວາມຊົມເຊີຍຄະນະປະຈຳສະພາແຫ່ງຊາດ, ລັດຖະບານ ແລະ ບັນດາອົງການທີ່ກ່ຽວຂ້ອງທີ່ໄດ້ຕັ້ງໜ້າຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ແລະ ຄົ້ນຄວ້າສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ໃຫ້ສອດຄ່ອງກັບສະພາບຕົວຈິງໃນໄລຍະແຕ່ປີ 2023-2025; ກອງປະຊຸມເຫັນດີເປັນເອກະພາບສູງຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ແນໃສ່ເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍຂອງລັດເຮົາ ສອດຄ່ອງກັບສະພາບຄວາມເປັນຈິງ, ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ຮັບຮອງເອົາການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025**

ກອງປະຊຸມເຫັນດີຕາມການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ທີ່ຄະນະປະຈຳສະພາແຫ່ງຊາດ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຊຶ່ງມີຮ່າງກົດໝາຍທັງໝົດຈຳນວນ 65 ສະບັບ, ໃນນີ້ ສ້າງໃໝ່ 22 ສະບັບ, ປັບປຸງ 43 ສະບັບ ໂດຍຈັດແບ່ງໃສ່ກອງປະຊຸມສະໄໝສາມັນເທື່ອທີ 5-9 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

1. ປີ 2023 ມີຮ່າງກົດໝາຍ ຈຳນວນ 25 ສະບັບ, ໃນນີ້ ສ້າງໃໝ່ 9 ສະບັບ, ປັບປຸງ 16 ສະບັບ, ຊຶ່ງນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຈຳນວນ 13 ສະບັບ, ສ້າງໃໝ່ 6 ສະບັບ, ປັບປຸງ 7 ສະບັບ ແລະ ກອງປະຊຸມສະໄໝສາມັນ ເທື່ອທີ 6 ຈຳນວນ 12 ສະບັບ, ສ້າງໃໝ່ 3 ສະບັບ, ປັບປຸງ 9 ສະບັບ;
2. ປີ 2024 ມີຮ່າງກົດໝາຍ ຈຳນວນ 26 ສະບັບ, ໃນນັ້ນ ສ້າງໃໝ່ 8 ສະບັບ, ປັບປຸງ 18 ສະບັບ, ຊຶ່ງນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຈຳນວນ 13 ສະບັບ, ສ້າງໃໝ່ 5 ສະບັບ, ປັບປຸງ 8 ສະບັບ ແລະ ກອງປະຊຸມສະໄໝສາມັນ ເທື່ອທີ 8 ຈຳນວນ 13 ສະບັບ, ສ້າງໃໝ່ 3 ສະບັບ, ປັບປຸງ 10 ສະບັບ;
3. ປີ 2025 ມີຮ່າງກົດໝາຍ ຈຳນວນ 14 ສະບັບ, ສ້າງໃໝ່ 5 ສະບັບ, ປັບປຸງ 9 ສະບັບ ຊຶ່ງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 9.

ສຳລັບລາຍຊື່ຂອງຮ່າງກົດໝາຍ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນແຕ່ລະເທື່ອນັ້ນ ໃຫ້ປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳ ກຳມາທິການກົດໝາຍ ເປັນເຈົ້າການປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ, ກະຊວງ, ອົງການ ທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້າ ແລະ ວາງແຜນຈັດຕັ້ງປະຕິບັດລະອຽດແຕ່ລະກອງປະຊຸມສະພາແຫ່ງຊາດ, ຄົ້ນຄວ້າກຳນົດເນື້ອໃນຕ່າງໆຂອງຮ່າງກົດໝາຍທີ່ຈະສ້າງ ຫຼື ປັບປຸງແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍແຕ່ລະສະບັບ ມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງໃນແຕ່ລະກອງປະຊຸມສະພາແຫ່ງຊາດ ໃຫ້ຮັບປະກັນຄຸນນະພາບ ແລະ ທັນຕາມກຳນົດເວລາ;
2. ບັນດາກຳມາທິການຂອງສະພາແຫ່ງຊາດ ໃຫ້ເອົາໃຈໃສ່ ຕິດຕາມ, ກວດກາ ແລະ ຊຸກຍູ້ ບັນດາກະຊວງ, ອົງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບຕົວຈິງ ແລະ ແນວທາງ, ນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍທີ່ປະກາດໃຊ້ແລ້ວ ເພື່ອຮັບປະກັນທາງດ້ານເນື້ອໃນ, ສຳເລັດທັນຕາມກຳນົດເວລາ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນ ແລະ ວິສາມັນແຕ່ລະເທື່ອ ຂອງສະພາແຫ່ງຊາດ ຊຸດທີ IX;

3. ມອບໃຫ້ລັດຖະບານ ຊີ້ນໍາ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນເຈົ້າການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025 ຢ່າງເຂັ້ມງວດ ໂດຍສະເພາະການແຕ່ງຕັ້ງຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ວາງແຜນການເຄື່ອນໄຫວວຽກງານສ້າງ ແລະ ປັບປຸງກົດໝາຍ, ແຜນງົບປະມານ ແລະ ບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ;

4. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ ຊີ້ນໍາບັນດາອົງການທີ່ບໍ່ແມ່ນກົງຈັກຂອງລັດຖະບານ ລວມທັງການຈັດຕັ້ງຂອງສະພາແຫ່ງຊາດ ໃຫ້ເປັນເຈົ້າການຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025 ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະອົງການ, ເປັນເຈົ້າການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍຂອງຕົນ ໃຫ້ຮັບປະກັນຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ທັນຕາມກໍານົດເວລາ;

5. ມອບໃຫ້ກໍາມາທິການກົດໝາຍ ສົມທົບກັບບັນດາກໍາມາທິການຂອງສະພາແຫ່ງຊາດ ແລະ ຄະນະເລຂາທິການສະພາແຫ່ງຊາດ ກະກຽມແຜນການ ແລະ ຂໍ້ແຜນງົບປະມານທີ່ຈໍາເປັນ ສໍາລັບການສ້າງ ແລະ ປັບປຸງກົດໝາຍ, ການຈັດຕັ້ງທາບທາມບັນດາຮ່າງກົດໝາຍ ທີ່ຈະນໍາເຂົ້າພິຈາລະນາຮັບຮອງໃນແຕ່ລະກອງປະຊຸມສະພາແຫ່ງຊາດ ໃຫ້ມີປະສິດທິພາບ, ປະສິດທິຜົນ;

6. ຄະນະປະຈໍາສະພາແຫ່ງຊາດ ມອບໃຫ້ກໍາມາທິການກົດໝາຍເປັນເຈົ້າການປະສານສົມທົບກັບຫ້ອງວ່າການສໍານັກງານປະທານປະເທດ ເພື່ອຮ່ວມກັນຄົ້ນຄວ້າ, ຮຽບຮຽງຮ່າງກົດໝາຍຕ່າງໆທີ່ກອງປະຊຸມສະພາແຫ່ງຊາດໄດ້ພິຈາລະນາຮັບຮອງເອົາ ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ກ່ອນສະເໜີປະທານສະພາແຫ່ງຊາດລົງລາຍເຊັນສະເໜີຫາປະ ທານປະເທດ ອອກລັດຖະດໍາລັດປະກາດໃຊ້ໃຫ້ທັນຕາມກໍານົດເວລາທີ່ກົດໝາຍກໍານົດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ